ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1006 /ອຄ.ດພນ

ນະຄອນຫຼວງວຽງຈັນ, ວັນທີ 22 May 2015

# ຂໍ້ຕົກລົງ

## ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳແລະການຄ້າເລກທີ 522/ນຍລົງວັນທີ 23 ທັນວາ2011;
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 132/ນຍລົງວັນທີ 18/12/2014 ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳສປປລາວ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ຫຼັກການທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງສະພາການຄ້າຕ່າງປະເທດ ແລະ ອົງການຕົວແທນທຸລະກິດຕ່າງປະເທດ ເພື່ອອຳນວຍຄວາມສະດວກໃນການປະສານງານ ແລະ ດຳເນີນທຸລະກິດຂອງອົງກອນທຸລະກິດຕ່າງປະເທດ, ສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດໃຫ້ແກ່ບັນດາຫົວໜ່ວຍທຸລະກິດຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ ແນໃສ່ເຮັດໃຫ້ການຄຸ້ມຄອງຫົວໜ່ວຍທຸລະກິດເປັນລະບົບ ແລະ ມີປະສິດທິພາບໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສົນທິສັນຍາ, ພັນທະທີ່ ສປປ ລາວ ໄດ້ລົງນາມກັບຕ່າງປະເທດ.

**ມາດຕາ 2 ສະພາການຄ້າຕ່າງປະເທດປະຈຳ ສປປ ລາວ**

ສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ແມ່ນການຈັດຕັ້ງໜຶ່ງຂຽນຫຍໍ້ວ່າ "ສຄ ຕປທ" ສ້າງຕັ້ງຂຶ້ນຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ເພື່ອເປັນຕົວແທນໃຫ້ແກ່ບັນດາກຸ່ມນັກທຸລະກິດຂອງຕ່າງປະເທດໃດໜຶ່ງ, ຊຶ່ງສາມາດເປັນໄດ້ທັງສະມາຄົມທຸລະກິດ, ສະພາການຄ້າ, ສາຂາສະພາການຄ້າ ແລະ ອົງການຜູ້ຕາງໜ້າຂອງຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດ ຢູ່ໃນ ສປປ ລາວ.

ມາດຕາ 3 ຫຼັກການພື້ນຖານໃນການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ

ຫຼັກການພື້ນຖານໃນການສ້າງຕັ້ງ ແລະ ເຄື່ອນໄຫວຂອງ "ສຄ ຕປທ" ມີດັ່ງນີ້:

1. ຕັ້ງຢູ່ບົນພື້ນຖານຄວາມສະໝັກໃຈສ້າງຕັ້ງຂຶ້ນໂດຍຖືກຕ້ອງຕາມກົດໝາຍ, ເຂົ້າຮ່ວມເຄື່ອນໄຫວຕາມລະບຽບການຂອງ "ສຄ ຕປທ"ໂດຍບໍ່ມີຜູ້ໃດຈໍາກັດ ຫຼື ບັງຄັບ;
2. ເຄື່ອນໄຫວເປັນປະຈໍາ ຫຼື ຕາມວາລະທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍຈາກ "ສຄ ຕປທ" ທີ່ຕົນສັງກັດຢູ່;
3. ທຸກການເຄື່ອນໄຫວຂອງ "ສຄ ຕປທ" ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ລະບຽບການ;
4. ພາຍຫຼັງໄດ້ຮັບການສ້າງຕັ້ງແລ້ວ ຕ້ອງເຂົ້າເປັນສະມາຊິກຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
5. ກຸ້ມຕົນເອງທາງດ້ານການເງິນ;
6. ເຄື່ອນໄຫວບໍ່ຫວັງຜົນກໍາໄລ;
7. ໂປ່ງໃສ, ເປີດເຜີຍ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບ ສະພາການຄ້າຕ່າງປະເທດທີ່ໄດ້ຮັບການອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ໃນ ສປປ ລາວ.

## ໝວດທີ 2

## ການສ້າງຕັ້ງສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ

ມາດຕາ 5 ເງື່ອນໄຂການສ້າງຕັ້ງ ສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ

ສະພາການຄ້າຕ່າງປະເທດປະຈໍາ ສປປ ລາວ ຕ້ອງມີເງື່ອນໄຂສ້າງຕັ້ງດັ່ງນີ້:

1. ມີການຢັ້ງຢືນຈາກສະຖານທູດ ຫຼື ກົງສຸນຂອງປະເທດຕົ້ນທາງໃນການຂໍສະເໜີສ້າງຕັ້ງ "ສຄ ຕປທ" ປະຈໍາ ສປປ ລາວ (ກໍລະນີສ້າງຕັ້ງໃໝ່);

2. ມີຈຸດປະສົງ, ທັງມີການກໍານົດຂອບເຂດການເຄື່ອນໄຫວຈະແຈ້ງ, ບໍ່ຂັດກັບລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ, ວັດທະນະທໍາ, ປະເພນີອັນດີງາມຂອງຊາດລາວ, ບໍ່ແຊກແຊງຮີດຄອງຄວາມເຊື່ອຖື ຂອງທ້ອງຖິ່ນ ແລະ ຂອງ ເຜົ່າຕ່າງໆ ໃນ ສປປ ລາວ, ບໍ່ເຄື່ອນໄຫວທີ່ກໍ່ໃຫ້ເກີດໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ບໍ່ແຕະຕ້ອງເຖິງສິດທິພື້ນຖານຂອງພົນລະເມືອງລາວ ແລະ ລວມທັງສິດເສລີພາບຂອງບຸກຄົນອື່ນ;

3. ມີຜູ້ລິເລີ່ມ, ຄະນະຂົນຂວາຍສ້າງຕັ້ງ, ຄະນະບໍລິຫານງານ, ຄະນະກວດກາ, ເລຂາທິການ ຫຼື ຫົວໜ້າຫ້ອງການ "ສຄ ຕປທ";

4. ມີຄະນະບໍລິຫານຢ່າງໜ້ອຍ 03 - 05 ຄົນທີ່ດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

5. ມີສໍານັກງານ, ບ່ອນເຮັດວຽກຂອງ "ສຄ ຕປທ" ຕັ້ງຢູ່ ນະຄອນຫຼວງວຽງຈັນ, ແຂວງຕ່າງໆ, ຕົວເມືອງໃຫຍ່ ຫຼື ຢູ່ໃນເຂດເສດຖະກິດພິເສດ ຂອງ ສປປ ລາວ ໂດຍມີການຢັ້ງຢືນຈາກອໍານາດການປົກຄອງ ບ່ອນທີ່ສໍານັກງານ ຫຼື ບ່ອນເຮັດວຽກຕັ້ງຢູ່, ມີໜັງສືຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ;

6. ມີກົດລະບຽບຂອງ"ສຄ ຕປທ" ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

7. ມີໃບຢັ້ງຢືນຈາກສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

**ມາດຕາ 6 ຂັ້ນຕອນການຂໍອະນຸຍາດສ້າງຕັ້ງສະພາການຄ້າຕ່າງປະເທດ ປະຈໍາ ສປປ ລາວ**

ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງຂໍສ້າງຕັ້ງ"ສຄ ຕປທ" ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດສ້າງຕັ້ງ ແລະ ເອກະສານປະກອບຕາມມາດຕາ 05 ຂອງຂໍ້ຕົກລົງສະບັບນີ້;

2. ຍື່ນເອກະສານຄົບຊຸດ ເຖິງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ຄົ້ນຄວ້າໃຫ້ການສະໜັບສະໜູນ;

3. ສຄອ ແຫ່ງຊາດລາວ ສົ່ງເອກະສານດັ່ງກ່າວມາຍັງກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການຄ້າພາຍໃນ);

4. ກົມການຄ້າພາຍໃນ ຄົ້ນຄວ້າພິຈາລະນາ ແລະ ນໍາສະເໜີ ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງ "ສຄ ຕປທ";

5. ພາຍຫຼັງອອກຂໍ້ຕົກລົງອະນຸຍາດສ້າງຕັ້ງ "ສຄ ຕປທ" ກົມການຄ້າພາຍໃນ ສະເໜີເຖິງ ກົມກ່ຽວຂ້ອງກະຊວງ ປກສ ເພື່ອຂໍອະນຸຍາດດວັດກາປະທັບ.

ການກໍານົດຊື່ ສະພາການຄ້າຕ່າງປະເທດ ປະຈໍາ ສປປ ລາວ ຕ້ອງເປັນພາສາລາວຢູ່ດ້ານເທິງ ແລະ ເປັນພາສາສາກົນ ຢູ່ດ້ານລຸ່ມ;

ກໍານົດເວລາການຍື່ນເອກະສານທັງໝົດນັບແຕ່ມື້ທີ່ໄດ້ ຍື່ນ-ຮັບ ຢ່າງເປັນທາງການທີ່ ສຄອ ແຫ່ງຊາດລາວ 5 ວັນ ແລະ ການຄົ້ນຄວ້າອະນຸມັດສ້າງຕັ້ງ ຈາກກະຊວງ ອຸດສາຫະກໍາ ແລະ ການຄ້າ 10 ວັນລັດຖະການ.

**ມາດຕາ 7 ຂັ້ນຕອນການຂໍອະນຸຍາດສ້າງຕັ້ງສາຂາສະພາການຄ້າຕ່າງປະເທດ ປະຈໍາ ສປປ ລາວ**

ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງຂໍສ້າງຕັ້ງສາຂາສະພາການຄ້າຕ່າງປະເທດ ປະຈໍາ ສປປ ລາວ ຢູ່ແຂວງ, ນະຄອນຫລວງ, ຕົວເມືອງໃຫຍ່, ເຂດເສດຖະກິດພິເສດ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດສ້າງຕັ້ງສາຂາໂດຍມີການຢັ້ງຢືນຈາກສະພາການຄ້າຕ່າງປະເທດຂອງ ພວກກ່ຽວ ແລະ ເອກະສານປະກອບຕາມມາດຕາ 05 ຂອງຂໍ້ຕົກລົງສະບັບນີ້;

2. ຍື່ນເອກະສານຄົບຊຸດ ເຖິງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ຄົ້ນຄວ້າໃຫ້ການສະໜັບສະໜູນ;

3. ສຄອ ແຫ່ງຊາດລາວ ສົ່ງເອກະສານດັ່ງກ່າວມາຍັງກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການຄ້າພາຍໃນ);

4. ກົມການຄ້າພາຍໃນ ຄົ້ນຄວ້າພິຈາລະນາ ແລະ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງສາຂາ "ສຄ ຕປທ";

5. ພາຍຫຼັງອອກຂໍ້ຕົກລົງອະນຸຍາດສ້າງຕັ້ງສາຂາ "ສຄ ຕປທ" ກົມການຄ້າພາຍໃນ ສະເໜີເຖິງ ກົມກ່ຽວຂ້ອງ ກະຊວງ ປກສ ເພື່ອຂໍອະນຸຍາດດວັດກາປະທັບ.

ການກຳນົດຊື່ ສາຂາສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ຕ້ອງເປັນພາສາລາວຢູ່ດ້ານເທິງ ແລະ ເປັນພາສາສາກົນ ຢູ່ດ້ານລຸ່ມ.

ກຳນົດເວລາການຍື່ນເອກະສານທັງໝົດນັບແຕ່ມື້ທີ່ໄດ້ຍື່ນ-ຮັບ ຢ່າງເປັນທາງການທີ່ ສຄອ ແຫ່ງຊາດ ລາວ 5 ວັນ ແລະ ການຄົ້ນຄວ້າອະນຸມັດສ້າງຕັ້ງ ຈາກກະຊວງ ອຸດສາຫະກຳ ແລະ ການຄ້າ 10 ວັນລັດຖະການ.

## ມາດຕາ 8 ກົດລະບຽບຂອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ

ສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ຕ້ອງກຳນົດກົດລະບຽບຂອງຕົນຂຶ້ນ, ຊຶ່ງປະກອບດ້ວຍເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

1. ຊື່ການຈັດຕັ້ງ;
2. ວັດຖຸປະສົງ;
3. ທີ່ຕັ້ງສຳນັກງານ, ຫ້ອງການຢູ່ສປປລາວ;
4. ລະບຽບການ (ໂຄງປະກອບກົງຈັກ ແລະ ບຸກຄະລາກອນ) ຂອງ"ສຄ ຕປທ";
5. ລົງທະບຽນເປັນສະມາຊິກ ແລະ ເງື່ອນໄຂການອອກຈາກເປັນສະມາຊິກ;
6. ລະບຽບການກ່ຽວກັບການດຳເນີນກອງປະຊຸມຂອງ "ສຄ ຕປທ";
7. ລະບຽບການຂອງຄະນະຄຸ້ມຄອງບໍລິຫານຂອງອົງການຈັດຕັ້ງ, ໃນນີ້ລວມທັງການຈັດຕັ້ງຄະນະຄຸ້ມຄອງບໍລິຫານ, ຈຳນວນກຳມະການຄຸ້ມຄອງບໍລິຫານ, ວາລະການດຳລົງຕຳແໜ່ງ, ການພົ້ນຈາກຕຳແໜ່ງ ແລະ ການປະຊຸມ;
8. ລະບຽບການກ່ຽວກັບບໍລິຫານ, ການເຄື່ອນໄຫວວຽກງານດ້ານການບັນຊີ ແລະ ການຄຸ້ມຄອງຊັບສິນບັດ;
9. ການເງິນຂອງການຈັດຕັ້ງ (ເງິນບຳລຸງຄ່າທຳນຽມສະມາຊິກ, ທຶນ ແລະ ແຫຼ່ງລາຍຮັບອື່ນໆ), ຖານະການເງິນພື້ນຖານຂອງການຈັດຕັ້ງ;
10. ລະບຽບການຂອງສາຂາ "ສຄ ຕປທ" ຕ້ອງປະຕິບັດຕາມລະບຽບການຂອງ "ສຄ ຕປທ" ປະຈຳ ສປປ ລາວ ທີ່ຕົນຂຶ້ນກັບໄດ້ວາງອອກ.

## ມາດຕາ 9 ອາຍຸສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ

1. ສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ມີອາຍຸ 05 ປີ ນັບແຕ່ມື້ໄດ້ຮັບການອະນຸມັດສ້າງຕັ້ງ ແລະ ສາມາດສະເໜີຂໍຕໍ່ອາຍຸໄດ້ ເທື່ອລະ 05 ປີ ໂດຍຍື່ນເອກະສານ ເຖິງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ ລາວ ເພື່ອຄົ້ນຄວ້າ ແລ້ວ ສົ່ງມາຍັງກະຊວງອຸດສາຫະກຳ ແລະ ການຄ້າ, ກົມການຄ້າພາຍໃນ ເພື່ອພິຈາລະນາ;
2. ອາຍຸຂອງສາຂາ "ສຄ ຕປທ" ແມ່ນໃຫ້ອີງໃສ່ອາຍຸຂອງສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ.

## ມາດຕາ 10 ການຍຸບເລີກສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ

ການຍຸບເລີກສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ມີ 2 ກໍລະນີດັ່ງນີ້:

ກໍລະນີທີໜຶ່ງ ອົງການຄຸ້ມຄອງສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວຂັ້ນສູນກາງ ແຈ້ງໃຫ້ ຍຸບເລີກໃນກໍລະນີໃດໜຶ່ງດັ່ງລຸ່ມນີ້:

1. ລະເມີດຂໍ້ຫ້າມຕາມມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

2. ເຄື່ອນໄຫວລະເມີດຕໍ່ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳ ຂອງລັດ, ກົດລະບຽບຂອງອົງການຈັດຕັ້ງຕົ້ນສັງກັດຂອງຕົນ;

3. ບໍ່ເຄື່ອນໄຫວຢ່າງຕໍ່ເນື່ອງ ເປັນເວລາຢ່າງໜ້ອຍ 01 ປີມາແລ້ວ ຫຼື ໝົດກຳນົດວາລະເຄື່ອນໄຫວແລ້ວ ແຕ່ຍັງບໍ່ຍື່ນເອກະສານຂໍຕໍ່ວາລະ ຫຼື ຟື້ນເຄື່ອນໄຫວຕໍ່ ພາຍຫຼັງທີ່ໄດ້ຮັບການແຈ້ງເຕືອນຈາກອົງການຄຸ້ມຄອງ "ສຄ ຕປທ" ມາແລ້ວ;

4. ບໍ່ມີການລາຍງານປະຈຳປີ ສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການເງິນຂອງຕົນ ໃຫ້ອົງການຄຸ້ມຄອງ "ສຄ ຕປທ" ເປັນເວລາ 01 ປີ.

ກໍລະນີທີສອງ "ສຄ ຕປທ" ສະໝັກໃຈ ຍຸບເລີກເອງໃຫ້ປະຕິບັດດັ່ງລຸ່ມນີ້:

1. ສະມາຊິກສາມັນຂອງ "ສຄ ຕປທ" ຫຼາຍກວ່າເຄິ່ງໜຶ່ງຂອງສະມາຊິກທັງໝົດຮຽກຮ້ອງໃຫ້ຍຸບເລີກ;
2. ບໍ່ມີທຶນເພື່ອເຄື່ອນໄຫວຕໍ່ໄປ;
3. ໝົດກຳນົດເວລາການເຄື່ອນໄຫວຕາມທີ່ກຳນົດໄວ້ ຢູ່ໃນກົດລະບຽບຂອງຕົນ;
4. ໄດ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ ຢູ່ໃນກົດລະບຽບຂອງຕົນແລ້ວ.

## ໝວດທີ 3
## ພາລະບົດບາດ, ສິດ, ໜ້າທີ່ ແລະ ຂໍ້ຫ້າມຂອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ

### ມາດຕາ 11 ພາລະບົດບາດຂອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ

ສະພາການຄ້າຕ່າງປະເທດປະຈຳ ສປປ ລາວມີພາລະບົດບາດເປັນຕົວແທນໃຫ້ແກ່ສະມາຄົມແລະກຸ່ມທຸລະກິດການຄ້າຂອງຕ່າງປະເທດໃດໜຶ່ງຢູ່ສປປລາວໃນການປະກອບຄຳຄິດເຫັນໃຫ້ແກ່ອົງການຄຸ້ມຄອງ "ສຄ ຕປທ" ແນໃສ່ເຮັດໃຫ້ສະພາບແວດລ້ອມໃນການດຳເນີນທຸລະກິດຢູ່ ສປປ ລາວ ມີຄວາມສະດວກ,ໂປ່ງໃສ,ມີຄວາມສະເໝີພາບໃນການແຂ່ງຂັນທີ່ເປັນທຳ, ສົ່ງເສີມການດຳເນີນທຸລະກິດຂອງບັນດາຫົວໜ່ວຍທຸລະກິດໃຫ້ເຄື່ອນໄຫວຢ່າງກົມກຽວຄ່ອງຕົວ, ຮ່ວມມືກັນໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 12 ສິດ ແລະ ໜ້າທີ່ຂອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ

ສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ມີສິດແລະໜ້າທີ່ດັ່ງນີ້:

1. ໃຫ້ຄຳປຶກສາທາງດ້ານຂໍ້ມູນຂ່າວສານກ່ຽວກັບນະໂຍບາຍ, ກົດໝາຍ ແລະ ກາລະໂອກາດ ໃນການດຳເນີນທຸລະກິດຢູ່ ສປປ ລາວ ແກ່ບັນດາສະມາຊິກຂອງຕົນ;

2. ຂົນຂວາຍ ແລະ ເຕົ້າໂຮມຫົວໜ່ວຍທີ່ດຳເນີນທຸລະກິດຖືກກົດໝາຍເຂົ້າເປັນສະມາຊິກຂອງຕົນ;

3. ສະເໜີຂໍສ້າງຕັ້ງສາຂາ "ສຄ ຕປທ" ຢູ່ບັນດາ ເມືອງໃຫຍ່, ແຂວງ, ເຂດເສດຖະກິດພິເສດ ໂດຍພາຍໃຕ້ການຄຸ້ມຄອງຂອງຕົນ;

4. ຄຸ້ມຄອງສາຂາ ແລະ ຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງຕົນ;

5. ສັງລວມຂໍ້ມູນ-ຂ່າວສານກ່ຽວກັບບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ, ສັງລວມຂໍ້ມູນກ່ຽວກັບການເຄື່ອນໄຫວທຸລະກິດຂອງພວກກ່ຽວແລະເຜີຍແຜ່ຂໍ້ມູນຂ່າວສານດັ່ງກ່າວໃຫ້ມວນຊົນໄດ້ຮັບຊາບເພື່ອສົ່ງເສີມທຸລະກິດຂອງພວກຕົນຢູ່ພາຍໃນ ສປປ ລາວ ແລະ ຕ່າງປະເທດ;

6. ປະສານຢ່າງໃກ້ສິດກັບສຄອ ແຫ່ງຊາດ ແລະ "ສຄ ຕປທ" ດ້ວຍກັນ ເພື່ອແລກປ່ຽນຂໍ້ມູນ-ຂ່າວສານ, ສ້າງກິດຈະກຳວຽກງານພັດທະນາດ້ານການຄ້າ, ຮ່ວມມືທາງດ້ານການຕະຫລາດ, ການພັດທະນາສິນຄ້າ ແລະ ການແຂ່ງຂັນທີ່ຖືກກົດໝາຍ;

7. ສະຫຼຸບລາຍງານສະພາບການເຄື່ອນໄຫວຂອງ "ສຄ ຕປທ" ແລະ ສາຂາຂອງຕົນມາຍັງສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດລາວ ຢ່າງເປັນປົກກະຕິ.

**ມາດຕາ 13 ຂໍ້ຫ້າມຂອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ**

ຫ້າມສະພາການຄ້າຕ່າງປະເທດປະຈຳ ສປປ ລາວມີພຶດຕິກຳດັ່ງນີ້:

1. ໃສ່ຊື່ສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ມີຄຳວ່າ "ແຫ່ງຊາດ";

2. ສວຍໃຊ້ສິດໃນການສ້າງຕັ້ງ "ສຄ ຕປທ" ເພື່ອເຄື່ອນໄຫວຂັດກັບລັດຖະທຳມະນູນ,ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

3. ເຄື່ອນໄຫວໃນສິ່ງທີ່ຈະເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດລາວ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດທິພື້ນຖານຂອງ ພົນລະເມືອງລາວ, ສິດເສລີພາບຂອງບຸກຄົນອື່ນ, ວັດທະນະທຳ ແລະ ຮີດຄອງປະເພດນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;

4. ປ່ອຍປະລະເລີຍ, ທຳລາຍຜົນປະໂຫຍດຂອງຊາດ, ຂອງບຸກຄົນ ແລະ ນິຕິບຸກຄົນ;

5. ເຄື່ອນໄຫວໃນສິ່ງທີ່ຈະນຳໄປສູ່ການແບ່ງແຍກຄວາມສາມັກຄີພາຍໃນຊາດ, ພາຍໃນທ້ອງຖິ່ນ ແລະ ເຜົ່າຕ່າງໆ;

6. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃຫ້ຢືມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ "ສຄ ຕປທ"ດ້ວຍຮູບການໃດກໍ່ຕາມ;

7. ສະໜັບສະໜູນການກໍ່ຄວາມບໍ່ສະຫງົບ ແລະ ການເຄື່ອນໄຫວອື່ນໆ ທີ່ຂັດກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

8. ກີດກັນ ຫຼື ຂັດຂວາງບໍ່ໃຫ້ຫົວໜ່ວຍທຸລະກິດໃດໜຶ່ງ ທີ່ມີເງື່ອນໄຂຄົບຖ້ວນ ທີ່ຂໍເຂົ້າເປັນສະມາຊິກ ຫຼື ບັງຄັບໃຫ້ຫົວໜ່ວຍທຸລະກິດໃດໜຶ່ງເຂົ້າເປັນສະມາຊິກດ້ວຍຄວາມບໍ່ສະໝັກໃຈ ຫຼື ໃຫ້ສະມາຊິກອອກໂດຍບໍ່ມີເຫດຜົນອັນສົມຄວນ.

## ໝວດທີ 4

## ອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ

**ມາດຕາ 14 ອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ**

ອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເປັນເຈົ້າການຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ "ສຄ ຕປທ" ແຕ່ສູນກາງລົງຮອດທ້ອງຖິ່ນປະກອບມີ:

- ຂັ້ນສູນກາງ ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ, ກົມການຄ້າພາຍໃນ;
- ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
- ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວຂັ້ນສູນກາງ**

ອົງການຄຸ້ມຄອງ"ສຄ ຕປທ" ຂັ້ນສູນກາງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນຕໍ່ການສະເໜີສ້າງຕັ້ງ,ຍຸບເລີກ ຫຼື ຕໍ່ອາຍຸ"ສຄ ຕປທ";
2. ນຳສະເໜີການປະກອບຄຳເຫັນຕໍ່ການອະນຸຍາດສ້າງຕັ້ງ,ຍຸບເລີກ ຫຼື ຕໍ່ອາຍຸໃຫ້ຂັ້ນເທິງພິຈາລະນາ;
3. ກໍລະນີມີການສ້າງຕັ້ງສາຂາ "ສຄ ຕປທ" ຢູ່ແຂວງ, ເມືອງໃຫຍ່ ແລະ ເຂດເສດຖະກິດພິເສດ ແມ່ນຫົວໜ້າກົມການຄ້າພາຍໃນເປັນຜູ້ອະນຸມັດ ສ້າງຕັ້ງ, ຍຸບເລີກ ຫຼື ຕໍ່ອາຍຸ;
4. ຄຸ້ມຄອງ, ຕິດຕາມການເຄື່ອນໄຫວ ຂອງ "ສຄ ຕປທ";
5. ໂຄສະນາເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບ "ສຄ ຕປທ";
6. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມການເຄື່ອນໄຫວຂອງ"ສຄ ຕປທ" ເພື່ອໃຫ້ເຄື່ອນໄຫວຕາມຈຸດປະສົງ ແລະ ຕາມພາລະບົດບາດຂອງ"ສຄ ຕປທ";
7. ສະເໜີຍ້ອງຍໍ "ສຄ ຕປທ" ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
8. ສົ່ງເສີມໃຫ້ບັນດາສະມາຊິກຂອງ "ສຄ ຕປທ" ສ້າງກິດຈະກຳເຄື່ອນໄຫວວຽກງານພັດທະນາດ້ານການຄ້າ, ແລກປ່ຽນບົດຮຽນກັບບັນດານັກທຸລະກິດລາວ, ນັກທຸລະກິດຕ່າງປະເທດດ້ວຍກັນ, ຮ່ວມມືທາງດ້ານການຕະຫຼາດ ແລະ ການພັດທະນາສິນຄ້າ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ຂັ້ນແຂວງ**

ອົງການຄຸ້ມຄອງ"ສຄ ຕປທ" ຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມການເຄື່ອນໄຫວຂອງສາຂາ"ສຄ ຕປທ" ໃນແຂວງ, ນະຄອນຫຼວງຂອງຕົນເພື່ອເຄື່ອນໄຫວຕາມຈຸດປະສົງແລະພາລະບົດບາດຂອງ"ສຄ ຕປທ";
2. ສະເໜີຍ້ອງຍໍສາຂາຂອງ"ສຄ ຕປທ" ໃນແຂວງຂອງຕົນ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
3. ສົ່ງເສີມໃຫ້ສະມາຊິກສາຂາຂອງ "ສຄ ຕປທ" ໃນແຂວງຂອງຕົນ ສ້າງກິດຈະກຳເຄື່ອນໄຫວວຽກງານພັດທະນາດ້ານການຄ້າ, ແລກປ່ຽນບົດຮຽນກັບ ບັນດານັກທຸລະກິດລາວ,ນັກທຸລະກິດຕ່າງປະເທດດ້ວຍກັນ, ຮ່ວມມືທາງດ້ານການຕະຫຼາດ ແລະ ການພັດທະນາສິນຄ້າ;
4. ສະຫຼຸບລາຍງານສະພາບການເຄື່ອນໄຫວຂອງສາຂາ"ສຄ ຕປທ"ທີ່ຕັ້ງຢູ່ແຂວງ, ນະຄອນຫຼວງ ຂອງຕົນມາຍັງກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເປັນປົກກະຕິ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນຕໍ່ການສະເໜີ ສ້າງຕັ້ງ, ຍຸບເລີກ ຫຼື ຕໍ່ອາຍຸ ຂອງ"ສຄ ຕປທ" ເພື່ອນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ);
2. ກໍລະນີມີການສະເໜີຂໍສ້າງຕັ້ງສາຂາຂອງ "ສຄ ຕປທ" ຢູ່ແຂວງແມ່ນປະຕິບັດຕາມຂໍ້ 1 ຂອງມາດຕານີ້;

3. ຄຸ້ມຄອງ, ຕິດຕາມການເຄື່ອນໄຫວ ຂອງ "ສຄ ຕປທ";

4. ຊີ້ນໍາສະພາການຄ້າ ແລະ ອຸດສາຫະກໍາແຂວງ, ນະຄອນຫຼວງວຽງຈັນ ໃນການຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງ ສາຂາ"ສຄ ຕປທ" ຢູ່ແຂວງ, ນະຄອນຫຼວງວຽງຈັນ, ໃນຕົວເມືອງໃຫຍ່ ແລະ ເຂດເສດຖະກິດພິເສດ;

5. ໂຄສະນາເຜີຍແຜ່, ແນະນໍາຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງກັບ "ທສຄ ຕປທ";

6. ແນະນໍາ, ອໍານວຍຄວາມສະດວກ, ຕິດຕາມການເຄື່ອນໄຫວຂອງ "ສຄ ຕປທ" ເພື່ອເຄື່ອນໄຫວຕາມຈຸດປະສົງ ແລະ ພາລະບົດບາດຂອງ"ສຄ ຕປທ";

7. ສະເໜີໃຫ້ການຍ້ອງຍໍ "ສຄ ຕປທ" ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມມາຍັງກະຊວງອຸດສາຫະກໍາ ແລະ ການຄ້າ;

8. ສົ່ງເສີມໃຫ້ບັນດາສະມາຊິກຂອງ "ສຄ ຕປທ" ສ້າງກິດຈະກໍາເຄື່ອນໄຫວວຽກງານພັດທະນາດ້ານການຄ້າແລກປ່ຽນບົດຮຽນກັບ ບັນດານັກທຸລະກິດລາວ, ຮ່ວມມືທາງດ້ານການຕະຫຼາດ ແລະ ການພັດທະນາສິນຄ້າ.

9. ສະຫຼຸບລາຍງານສະພາບການເຄື່ອນໄຫວຂອງ "ສຄ ຕປທ" ມາຍັງກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການຄ້າພາຍໃນ) ເປັນປົກກະຕິ.

### ມາດຕາ 18 ສິດ ແລະ ໜ້າທີ່ຂອງຂະແໜງການທີ່ກ່ຽວຂ້ອງ

ຂະແໜງການທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ ຊ່ວຍຄຸ້ມຄອງ, ຕິດຕາມ ແລະ ປະສານສົມທົບກັບຂະແໜງອຸດສາຫະກໍາ ແລະ ການຄ້າ, ສຄອ ແຫ່ງຊາດລາວ, ສຄອ ແຂວງ, ສຄອ ນະຄອນຫຼວງວຽງຈັນ ໃນການເຄື່ອນໄຫວຂອງ "ສຄ ຕປທ" ຕາມພາລະບົດບາດຂອງຕົນ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນຫຼືການຈັດຕັ້ງໃດຫາກລະເມີດຂໍ້ຕົກລົງສະບັບນີ້ຫຼືກົດໝາຍ ແລະ ລະບຽບການອື່ນ ຈະຖືກກ່າວເຕືອນ, ສັ່ງໂຈະ, ຍຸບເລີກ ຫຼື ດໍາເນີນຄະດີຕາມສະຖານໜັກຫຼືເບົາ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 21 ຕາປະທັບ

ສະພາການຄ້າຕ່າງ ປະເທດ ປະຈໍາ ສປປ ລາວ ມີຕາປະທັບເປັນຂອງ ຕົນເອງ ເພື່ອເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ບົ່ງໄວ້ໃນ ຂໍ້ຕົກລົງສະບັບນີ້, ໂດຍແມ່ນກະຊວງ

ອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເປັນຜູ້ສະເໜີຫາ ກະຊວງປ້ອງກັນຄວາມສະຫງົບ ເພື່ອອະນຸມັດອອກ ແລະ ຄວັດຕາປະທັບດັ່ງກ່າວ.

ສຳລັບຮູບແບບຕາປະທັບແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ.

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນເປັນເຈົ້າການ ໂດຍປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ຫຼັງຈາກ 15 ວັນນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ;

ສ່ວນການຈັດຕັ້ງໃດທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນຂໍ້ຕົກລົງສະບັບນີ້ ໃຫ້ປະກອບເອກະສານຄົບຖ້ວນຕາມທີ່ໄດ້ບົ່ງໄວ້ໃນ ຕາມຕາ 6 ຂອງຂໍ້ຕົກລົງສະບັບນີ້ ເພື່ອຂໍອະນຸມັດສ້າງຕັ້ງຄືນໃໝ່ພາຍໃນກຳນົດ 120 ວັນ ນັບແຕ່ວັນຂໍ້ຕົກລົງສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ສົມມາດ ພົນເສນາ